ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 10 ຫາ 14 ມີນາ 2025




ຮອງນາຍົກລັດຖະມົນຕີ ເຂົ້າຮ່ວມບຸນກາເຟ-ຊາ ພູພຽງບໍລະເວນ ປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ຮອງນາຍົກລັດຖະມົນຕີ ເຂົ້າຮ່ວມບຸນກາເຟ-ຊາ ພູພຽງບໍລະເວນ ປີ 2024

ພາບ-ຂ່າວໂດຍ:ໜັງສືພິມປະຊາຊົນ

ບຸນກາເຟ-ຊາ ແລະ ຜົນຜະລິດກະສິກຳ ພູພຽງບໍລະເວນ ປະຈຳປີ 2025 ໄດ້ຈັດຂຶ້ນໃນລະຫວ່າງວັນທີ 8-10 ກຸມພາຜ່ານມາ, ທີ່ອະນຸສາວະລີ ສີທົນ ກົມມະດຳ ເມືອງປາກຊ່ອງ ແຂວງຈຳປາສັກ ໂດຍມີ ທ່ານ ພົນເອກ ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ທ່ານ ອາລຸນໄຊ ສູນນະລາດ ເຈົ້າແຂວງຈຳປາສັກ, ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໂດຍມີແຂກຖືກເຊີນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນລິດ ເທບບຸນສູງ ວ່າການເຈົ້າເມືອງປາກຊ່ອງ ໄດ້ໃຫ້ຮູ້ວ່າ: ບຸນກາເຟ-ຊາ ພູພຽງບໍລະເວນ ປະຈຳປີ 2025 ມີຮ້ານວາງສະແດງສິນຄ້າ ທັງພາຍໃນແຂວງ ແລະ ຕ່າງແຂວງທັງໝົດ 70 ກວ່າຫົວໜ່ວຍ ລວມມູນຄ່າຜະລິດຕະພັນ ປະມານ 10 ຕື້ກີບ, ຄາດວ່າຈະມີເງິນໝູນວຽນໃນແຕ່ລະວັນ 1 ຕື້ກວ່າກີບ.

ການຈັດງານຄັ້ງນີ້, ເພື່ອສົ່ງເສີມການຜະລິດຂອງຊາວສວນກາເຟ-ຊາ ແລະ ຜົນຜະລິດກະສິກຳຂອງແຂວງຈຳປາສັກ ແລະ ບັນດາແຂວງ, ລວມເຖິງຜູ້ປະກອບການທຸລະກິດກາເຟ-ຊາ ຈາກທົ່ວປະເທດ ໄດ້ຮັບຮູ້ເຂົ້າໃຈເຖິງປະຫວັດຄວາມເປັນມາຂອງກາເຟ-ຊາ ພູພຽງບໍລະເວນ, ຄວາມຫຼາກຫຼາຍດ້ານແນວພັນຊະນິດກາເຟ, ວິຖີຊີວິດຊາວສວນເມືອງປາກຊ່ອງ ທີ່ຕິດພັນກັບການສ້າງຄຸນຄ່າໃນການຜະລິດກາເຟ-ຊາ ຄຸນນະພາບ ແລະ ສ້າງຄ່ານິຍົມ ໃນໝູ່ຄົນຮຸ່ນໃໝ່ ໃຫ້ມີວັດທະນະທຳການດື່ມກາເຟ-ຊາ ພູພຽງບໍລະເວນ; ທັງເປັນການສ້າງຕ່ອງໂສ້ມູນຄ່າການຜະລິດ, ການສົ່ງເສີມການຕະຫຼາດແລກປ່ຽນການຊື້-ຂາຍ, ຈັບຄູ່ທຸລະກິດ ແລະ ການ




ສົ່ງອອກ ນັບແຕ່ຊາວສວນຜູ້ຜະລິດ ຜ່ານຂະບວນເຕັກນິກການຄັດເລືອກຄຸນນະພາບເມັດກາເຟ-ຊາ, ການຂົ້ວ, ການປຸງແຕ່ງໃນຫຼາຍຂັ້ນຕອນ, ຈົນຮອດສິລະປະການຊົງກາເຟ ທີ່ເປັນເອກະລັກ ຮັກສາລົດຊາດສະເພາະ ກາເຟ-ຊາພູພຽງບໍລະເວນ ໂດຍສະເພາະ ຢູ່ເມືອງປາກຊ່ອງ ພື້ນແຜ່ນດິນຄຳ ແລະ ດິນພູໄຟ ລົມຄຳຊ່າລື ຈາກສວນ-ສູ່ຈອກ ຂອງຜູ້ຊົມໃຊ້.

ບຸນກາເຟ-ຊາ ຂອງຊາວເມືອງປາກຊ່ອງ ແມ່ນໜຶ່ງໃນ 12 ກິດຈະກຳ ທີ່ກຳນົດເຂົ້າໃນກິດຈະກຳການທ່ອງທ່ຽວຂອງແຂວງຈຳປາສັກ ເຮັດໃຫ້ບັນຍາກາດການທ່ອງທ່ຽວພາຍໃນເມືອງ ມີຄວາມຄຶກຄື້ນ




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;